ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------=====000=====----------

ນະຄອນຫຼວງວຽງຈັນ
ເມືອງຈັນທະບູລີ
ຄະນະກຳມະການ ຈັດງານບຸນອອກພັນສາ ປະວໍລະນາ
ແລະ ຊ່ວງເຮືອປະເພນີ ປະຈຳປີ 2018

ເລກທີ 1919 /ຄຊ.ຈລ
ລົງວັນທີ 02 Oct 2018

## ແຈ້ງການ

**ເຖິງ:** ສຳນັກງານ ອົງການ, ໂຮງແຮມ, ເຮືອນພັກ, ບັນດາ ຫົວໜ່ວຍທຸລະກິດ, ຊາວຄ້າຂາຍ, ວັດວາອາຮາມຕ່າງໆ ຕະຫຼອດຮອດພໍ່-ແມ່ປະຊາຊົນທີ່ຄ້າ-ຂາຍ ຢູ່ຕະຫຼາດນັດ ພາຍໃນ ງານບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ ທ່າວັດຈັນ ແລະ ບໍລິເວນໃກ້ຄຽງ ທີ່ນັບຖື.

**ເລື່ອງ:** ຂໍການຮ່ວມມື ແລະ ອຳນວຍຄວາມສະດວກ ໃນການຈັດງານ ບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ທ່າວັດຈັນ.

- ອີງຕາມ: ການຊີ້ນຳ ຂອງ ກອງປະຊຸມ ອົງການປົກຄອງ ນະຄອນຫຼວງວຽງຈັນ ຄັ້ງວັນທີ 7 ກັນຍາ 2018.
- ອີງຕາມ: ການແຕ່ງຕັ້ງ ຄະນະຮັບຜິດຊອບ ງານບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີປະຈຳປີ 2018 ທີ່ທ່າວັດຈັນ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ສະບັບເລກທີ 1908/ຈມ.ຈລ, ລົງວັນທີ 2 ຕຸລາ 2018.

ເພື່ອເຮັດໃຫ້ການຈັດຕັ້ງ ສະເຫຼີມສະຫຼອງ ງານບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ທ່າວັດຈັນ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ມີຄວາມສະຫງົບ ເປັນລະບຽບຮຽບຮ້ອຍ ແລະ ສຳເລັດຢ່າງຈົບງາມ.

ປະທານ ຄະນະກຳມະການ ງານບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ທ່າວັດຈັນ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ຈຶ່ງອອກແຈ້ງການເຖິງ ສຳນັກງານ ອົງການ, ໂຮງແຮມ, ເຮືອນພັກ, ບັນດາ ຫົວໜ່ວຍທຸລະກິດ, ຊາວຄ້າຂາຍ, ວັດວາອາຮາມຕ່າງໆ ຕະຫຼອດຮອດພໍ່-ແມ່ປະຊາຊົນ ທີ່ຄ້າ-ຂາຍ ຢູ່ຕະຫຼາດນັດ ພາຍໃນງານບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ທ່າວັດຈັນ ທົ່ວເຖິງກັນວ່າ:

1. **ຊ່ວຍອຳນວຍຄວາມສະດວກ ແລະ ມອບສະຖານທີ່ ເຊັ່ນ**: ບໍລິເວນໜ້າເຮືອນ, ໜ້າບ້ານ ( ນອກຮົ້ວ, ນອກກຳແພງ ) ທີ່ຕິດກັບທາງໃຫຍ່, ທາງຊອຍ ຂອບເຂດບໍລິເວນ ຈັດງານບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ທ່າວັດຈັນ ແລະ ບໍລິເວນໃກ້ຄຽງ ໃຫ້ຄະນະຮັບຜິດຊອບຈັດງານ ເພື່ອຈັດສັນສະຖານທີ່ໃນການສະແດງ ແລະ ຂາຍສິນຄ້າ ຄື: ຂອບເຂດສຳປະທານ ສວນເຈົ້າອານຸວົງ, ຟຸດບາດ ທັງສອງຟາກເສັ້ນທາງເຈົ້າຟ້າງຸ່ມ ແຕ່ສາມແຍກປາກປ່າສັກ ລົງຮອດສີ່ແຍກ ໂຮງໝໍມະໂຫສົດ, ໜ້າໂຮງແຮມລ້ານຊ້າງ, ຟຸດບາດ ທັງສອງຟາກເສັ້ນທາງ, ສາມແຍກໄຟແດງ ວັດອິນແປງ, ແຕ່ໂຮງຮຽນມັດທະຍົມສີໂຄດ ລົງມາ ສີ່ແຍກໄຟແດງສີຫອມ, ສອງຟາກຟຸດບາດ ເສັ້ນທາງເສດຖາທິລາດ, ບັນດາວັດ ທີ່ຢູ່ໃກ້ຄຽງຂອບເຂດຈັດງານ ແລະ ບ່ອນຈອດລົດຕໍ່ໜ້າ ໂຮງໝໍມະໂຫສົດ ແມ່ນໄດ້ກຳນົດເປັນບ່ອນຝາກລົດ ຜູ້ມາທ່ຽວຊົມງານບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ທ່າວັດຈັນ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ.

- **ຖ້າຫາກ ທ່ານໃດ ຫາກຕ້ອງການຂາຍເຄື່ອງ ແມ່ນໃຫ້ພົວພັນ ນຳຄະນະກຳມະການຈັດງານ ແລ້ວຄະນະກຳມະການ ຈະຈັດສັນສະຖານທີ່ຂາຍເຄື່ອງໃຫ້ ຕາມຄວາມເໝາະສົມ ພ້ອມເສຍຄ່າພັນທະໃຫ້ຄະນະກຳມະການ ຕາມລະບຽບການຈັດງານໃນຄັ້ງນີ້.**

2. **ສຳລັບຂອບເຂດ ບໍລິເວນພື້ນທີ່ຈັດງານບຸນອອກພັນສາ ປະວໍລະນາ ແລະ ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ທ່າວັດຈັນ**: ທາງດ້ານເໜືອ ໃຫ້ກຳນົດເອົາແຕ່ຈຸດປ່ອຍເຮືອ ເຂດເມືອງສີໂຄດຕະບອງ ລົງໄປຫາ ໂຮງໝໍມະໂຫສົດ.

3. **ສຳລັບເສັ້ນທາງເຈົ້າຟ້າງຸ່ມ ແຕ່ສາມແຍກປາກປາສັກ ລົງຮອດ 4 ແຍກ ໂຮງໝໍມະໂຫສົດ ທັງສອງຟາກຟຸດບາດ** ແມ່ນອານຸຍາດໃຫ້ວາງສິນຄ້າ ແລະ ຂາຍເຄື່ອງໄດ້, ຍົກເວັ້ນບໍ່ອານຸຍາດໃຫ້ຂາຍເຄື່ອງຢູ່ສອງຈຸດສະເພາະເສັ້ນທາງດັ່ງກ່າວນີ້ຄື: ຕໍ່ໜ້າສຳນັກງານ ປະທານປະເທດ, ດ້ານຂ້າງສຳນັກງານ ປະທານປະເທດ ແລະ ຢູ່ຈຸດທາງຂຶ້ນເບື້ອງສວນເຈົ້າອານຸວົງ ນັບແຕ່ກົກໂພໃຫຍ່ ຈົນຮອດກົກໂພນ້ອຍ ( **ໝາຍຄວາມວ່າ**: ເບື້ອງກົງກັນຂ້າມຕໍ່ໜ້າວັດຈັນຂຶ້ນໄປຫາກົກໂພນ້ອຍ ແມ່ນບໍ່ອານຸຍາດໃຫ້ວາງຂາຍສິນຄ້າ ແມ່ນຈົ່ງໄວ້ໃຫ້ແກ່ ມວນຊົນຍ່າງທ່ຽວຊົມງານ ).

4. **ສຳລັບ ເສັ້ນທາງແຕ່ສີ່ແຍກໄຟແດງ ວັດອິນແປງ ຫາ ເສັ້ນທາງເຈົ້າຟ້າງຸ່ມ ແລະ ສີ່ແຍກໄຟແດງກະຊວງ ແຜນການ ແລະ ການລົງທຶນ ຫາເສັ້ນທາງເຈົ້າຟ້າງຸ່ມ ຕາມທາງຍ່າງຟຸດບາດ** ແມ່ນໃຫ້ຂາຍເຄື່ອງຜະລິດຕະພັນທີ່ຜະລິດຢູ່ພາຍໃນປະເທດ ແລະ ຫ້າມຊາວຕ່າງປະເທດ ຂາຍສິນຄ້າທຸກຊະນິດພາຍໃນງານ.

5. **ກຳນົດ ເວລາ ມອບສະຖານທີ່ ໃຫ້ຄະນະກຳມະການຈັດງານບຸນ** ແມ່ນນັບແຕ່ວັນທີ 19 ຕຸລາ 2018 ຫາ ວັນທີ 26 ຕຸລາ 2018.
6. **ສຳລັບ ຄົນລາວ ຜູ້ທີ່ຈະນຳເອົາຜະລິດຕະພັນສິນຄ້າຂອງລາວ ເຂົ້າໄປວາງສະແດງ-ຂາຍ, ອາຫານ ແລະ ເຄື່ອງດື່ມ ( ຍົກເວັ້ນເຄື່ອງດື່ມມືນເມົາປະເພດ ເຫຼົ້າ, ເບຍ )** ຕ້ອງໄດ້ຮັບອານຸຍາດນຳໃຊ້ສະຖານທີ່ຈາກຄະນະຮັບຜິດຊອບຈັດງານບຸນ ແລະ ຕ້ອງຈ່າຍເງິນຄ່າພັນທະສະຖານທີ່ ຕາມລະບຽບການທີ່ທາງຄະນະກຳມະການໄດ້ກຳນົດໄວ້.
7. **ມອບໃຫ້ຄະນະຮັບຜິດຊອບ ແຕ່ລະອານຸກຳມະການຈັດງານ ທີ່ຖືກແຕ່ງຕັ້ງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ** ເຮັດວຽກງານສຶກສາອົບຮົມນຳພາການເມືອງ-ແນວຄິດ ໃຫ້ປະຊາຊົນ, ບັນດາເຈົ້າຂອງຫ້າງຮ້ານ, ສຳນັກງານ, ອົງການ, ຫົວໜ່ວຍທຸລະກິດຕ່າງໆ ທີ່ຢູ່ໃນຂອບເຂດຈັດງານ ຮັບຮູ້ເຂົ້າໃຈ ແລະ ຊ່ວຍອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ກັບ ຄະນະກຳມະການ ຈັດງານບຸນຄັ້ງໃຫ້ດຳເນີນຕາມແຜນການທີ່ວາງອອກ ແລະ ມີຜົນສຳເລັດຢ່າງຈົບງາມ.

**ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ຈົ່ງໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຈັດງານໃນຄັ້ງນີ້ດ້ວຍ.**

**ຄະນະກຳມະການ ຈັດງານບຸນອອກພັນສາ ປະວັລະນາ ແລະ**
**ຊ່ວງເຮືອປະເພນີ ປະຈຳປີ 2018 ທີ່ທ່າວັດຈັນ**

**ປະທານ**

ບົວລອນ ວົງດາລາແສນ

**ບ່ອນສົ່ງ:**

- **ທ່ານເຈົ້າຄອງ-ຮອງເຈົ້າຄອງ ນວ ທ່ານລະ 01 ສະບັບ.**
- **ທ່ານເຈົ້າເມືອງ-ຮອງເຈົ້າເມືອງຈລ ທ່ານລະ 01 ສະບັບ.**
- **ຫົວໜ້າ ຄະນະຮັບຜິດຊອບແຕ່ລະອານຸກຳມະການ 1 ສະບັບ.**
- **ບັນດາຫົວໜ່ວຍ ທຸລະກິດຫ້າງຮ້ານ ໃນຂອບເຂດຈັດງານ.**
- **ເກັບມ້ຽນສຳເນົາ 2 ສະບັບ.**